ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 42 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 15 JAN 2016

# ຂໍ້ຕົກລົງ
# ວ່າດ້ວຍ ການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ

- ອີງຕາມກົດໝາຍ ວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1995 ແລະ ກົດໝາຍ ວ່າດ້ວຍ ການດັດແກ້ກົດໝາຍ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍ ວ່າດ້ວຍ ທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006 ແລະ ດຳລັດ ວ່າດ້ວຍ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 275/ນຍ, ລົງວັນທີ 25 ກັນຍາ 2009;
- ອີງຕາມການຄົ້ນຄວ້າ ແລະ ສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 10 /ກຄທ, ລົງວັນທີ 12/01/2016

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

## ໝວດທີ I
## ຂໍ້ກຳນົດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບ ການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ ຢູ່ ສປປ ລາວ ເພື່ອເປັນບ່ອນອີງໃຫ້ແກ່ການຂໍ ແລະ ພິຈາລະນາການຂໍສ້າງຕັ້ງ, ແນໃສ່ຮັບປະກັນໃຫ້ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດສ້າງຕັ້ງ ມີຄວາມເຂັ້ມແຂງ ແລະ ໝັ້ນຄົງ, ສາມາດປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນໄດ້.

### ມາດຕາ 2. ຫຼັກການໃນການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ

ການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດທັງພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ບໍ່ຮັບພິຈາລະນາ ກ່ຽວກັບການຂໍສ້າງຕັ້ງທະນາຄານທີ່ບໍ່ມີຕົວຕົນ ແລະ ຜູ້ຂໍສ້າງຕັ້ງທີ່ບໍ່ມີຕົວຕົນ.

## ໝວດທີ II
## ການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ

**ມາດຕາ 3. ການຖືຮຸ້ນສ້າງຕັ້ງທະນາຄານທຸລະກິດ**

ບຸກຄົນ, ນິຕິບຸກຄົນ ສາມາດເປັນຜູ້ຖືຮຸ້ນສ້າງຕັ້ງທະນາຄານທຸລະກິດໄດ້ ແຕ່ໃນນັ້ນຕ້ອງມີ ໜຶ່ງ ຫຼື ຫຼາຍທະນາຄານ ຖືຮຸ້ນສ້າງຕັ້ງຫຼາຍກວ່າ 50% (ຫ້າສິບສ່ວນຮ້ອຍ) ຂອງຈຳນວນຮຸ້ນທັງໝົດທີ່ສາມາດລົງຄະແນນສຽງໄດ້. ສຳລັບບຸກຄົນ, ຜູ້ໜຶ່ງ ສາມາດຖືຮຸ້ນສ້າງຕັ້ງທະນາຄານທຸລະກິດ ໄດ້ບໍ່ເກີນ 10% (ສິບສ່ວນຮ້ອຍ) ຂອງຈຳນວນຮຸ້ນທັງໝົດທີ່ສາມາດລົງຄະແນນສຽງໄດ້. ທະນາຄານທຸລະກິດພາຍໃນ ແລະ ຕ່າງປະເທດ ສາມາດສ້າງຕັ້ງທະນາຄານໃນກຸ່ມໃນ ສປປ ລາວ ໂດຍສາມາດຖືຮຸ້ນເຖິງ 100% (ຮ້ອຍສ່ວນຮ້ອຍ) ຂອງທະນາຄານໃນກຸ່ມ ແລະ ສາມາດສ້າງຕັ້ງສາຂາຂອງຕົນໄດ້ ຕາມທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້.

ຜູ້ຖືຮຸ້ນທີ່ເປັນບຸກຄົນ ຫຼື ນິຕິບຸກຄົນ ບໍ່ໃຫ້ມີຜົນປະໂຫຍດສຳຄັນໃນທະນາຄານ ຫຼາຍກວ່າ 2 ແຫ່ງທີ່ສ້າງຕັ້ງຢູ່ ສປປ ລາວ, ຍົກເວັ້ນກໍລະນີເຂົ້າໄປຖືຮຸ້ນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ທະນາຄານທີ່ອ່ອນແອ ຕາມການອະນຸຍາດຂອງທະນາຄານ ແຫ່ງ ສປປ ລາວ.

ບຸກຄົນຜູ້ຖືຮຸ້ນ ທີ່ມີສາຍກ່ຽວພັນກັນທາງຄອບຄົວ ຫຼື ມີສາຍຜົວພັນສາຍຍາດ ບໍ່ວ່າສາຍຕັ້ງ ຫຼື ສາຍຂວາງ ໃຫ້ຖືວ່າທັງໝົດເປັນບຸກຄົນດຽວ ແລະ ໃຫ້ປະຕິບັດຕາມຂໍ້ຈຳກັດການຖືຮຸ້ນຂອງບຸກຄົນ ທີ່ໄດ້ກຳນົດໃນວັກ 1 **ຂອງມາດຕານີ້**.

**ມາດຕາ 4. ສຳນວນຄຳຮ້ອງຂໍສ້າງຕັ້ງ**

ສຳນວນຄຳຮ້ອງຂໍສ້າງຕັ້ງທະນາຄານທຸລະກິດ ຫຼື ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງປະກອບດ້ວຍເອກະສານ ດັ່ງນີ້:

4.1 ເອກະສານລວມ:

1) ຄຳຮ້ອງຂໍສ້າງຕັ້ງ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກ;
2) ບົດວິພາກເສດຖະກິດ-ເຕັກນິກ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກ;
3) ຮ່າງກົດລະບຽບ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວກຳນົດອອກ;
4) ມະຕິ ຫຼື ຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບສ້າງຕັ້ງ, ໃນກໍລະນີມອບໝາຍໃຫ້ຜູ້ຕາງໜ້າ ເປັນຜູ້ຮັບຜິດຊອບໃນການຂໍສ້າງຕັ້ງ ຕ້ອງມີໃບມອບສິດໃຫ້ຜູ້ຕາງໜ້າ ຢ່າງຖືກຕ້ອງຕາມລະບຽບກົດໝາຍ ຂອງ ສປປ ລາວ (ຜູ້ຕາງໜ້າຕ້ອງແມ່ນນິຕິບຸກຄົນ ທີ່ຖືກສ້າງຕັ້ງ ຕາມລະບຽບກົດໝາຍຂອງ ສປປ ລາວ);
5) ສັນຍາຮ່ວມທຶນ (ສັນຍາສ້າງຕັ້ງທະນາຄານ);
6) ມະຕິກອງປະຊຸມຂອງຜູ້ຖືຮຸ້ນສ້າງຕັ້ງ ກ່ຽວກັບການຮັບຮອງເອົາ ຂໍ້ 2) ຫາ ຂໍ້ 5) ຂ້າງເທິງນີ້ ແລະ ການແຕ່ງຕັ້ງສະພາບໍລິຫານ ແລະ ຄະນະຜູ້ອຳນວຍການຊຸດທຳອິດ;

7) ຄູ່ມືດຳເນີນງານ ກ່ຽວກັບວຽກງານການບັນຊີ, ການບໍລິຫານຄວາມສ່ຽງ, ການກວດກາພາຍໃນ, ການຄຸ້ມຄອງພະນັກງານ, ການບໍລິການຜະລິດຕະພັນຕ່າງໆ, ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ອື່ນໆ;

8) ໃບຢັ້ງຢືນຈາກກົມບໍລິການ, ທະນາຄານແຫ່ງ ສປປ ລາວກ່ຽວກັບການຈ່າຍຄ່າທຳນຽມການຍື່ນຄຳຮ້ອງຂໍສ້າງຕັ້ງ;

9) ເອກະສານອື່ນ ຕາມການກຳນົດຂອງຫ້ອງການບໍລິການລົງທຶນປະຕູດຽວໃນກິດຈະການທົ່ວໄປ.

**4.2 ເອກະສານສະເພາະ ສຳລັບຜູ້ຂໍສ້າງຕັ້ງທີ່ເປັນນິຕິບຸກຄົນ:**

1) ເອກະສານຢັ້ງຢືນຖານະການເງິນຂອງຜູ້ຂໍສ້າງຕັ້ງໂດຍໄດ້ຮັບການກວດສອບ ຈາກອົງການກວດສອບພາຍນອກ 3 (ສາມ) ປີ ຍ້ອນຫຼັງຕໍ່ເນື່ອງ;

2) ເອກະສານຫຼັກຖານຢັ້ງຢືນແຫຼ່ງທຶນ ທີ່ຈະມາສ້າງຕັ້ງທະນາຄານ ຢັ້ງຢືນໂດຍທະນາຄານທີ່ຮັບຝາກແຫຼ່ງທຶນດັ່ງກ່າວ (ສຳລັບແຫຼ່ງທຶນທີ່ເປັນເງິນ) ແລະ ຢັ້ງຢືນໂດຍອົງການຄຸ້ມຄອງທະບຽນຊັບສິນທີ່ກ່ຽວຂ້ອງ (ສຳລັບແຫຼ່ງທຶນທີ່ເປັນວັດຖຸທີ່ມີການຈົດທະບຽນຄຸ້ມຄອງ) ແລະ ເອກະສານຊື້ຂາຍທີ່ກ່ຽວຂ້ອງ (ສຳລັບແຫຼ່ງທຶນທີ່ເປັນວັດຖຸທີ່ບໍ່ມີການຈົດທະບຽນຄຸ້ມຄອງ);

3) ໜັງສືຍິນຍອມໃຫ້ ທະນາຄານແຫ່ງ ສປປ ລາວ ສາມາດກວດສອບແຫຼ່ງທຶນທີ່ຈະນຳມາສ້າງຕັ້ງທະນາຄານ;

4) ເອກະສານຢັ້ງຢືນໂຄງສ້າງການຖືຮຸ້ນທັງໝົດຂອງຜູ້ຂໍສ້າງຕັ້ງ ລວມທັງຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງຂອງການຖືຮຸ້ນ;

5) ສຳເນົາໃບທະບຽນວິສາຫະກິດລວມທັງໃບອະນຸຍາດດຳເນີນທຸລະກິດຂອງຜູ້ຂໍສ້າງຕັ້ງ;

6) ສຳເນົາກົດລະບຽບຂອງຜູ້ຂໍສ້າງຕັ້ງ;

7) ມະຕິຕົກລົງຂອງສະພາບໍລິຫານ, ກອງປະຊຸມຜູ້ຖືຮຸ້ນ ຫຼື ຜູ້ທີ່ມີສິດອຳນາດຂອງຜູ້ຂໍສ້າງຕັ້ງກ່ຽວກັບການຕົກລົງສ້າງຕັ້ງທະນາຄານ ຢູ່ ສປປ ລາວ;

8) ໜັງສືອະນຸຍາດຈາກອົງການທີ່ມີສິດອຳນາດໃຫ້ມາສ້າງຕັ້ງທະນາຄານ ຢູ່ ສປປ ລາວ ຕາມລະບຽບກົດໝາຍຂອງປະເທດກ່ຽວຂ້ອງ (ສຳລັບນິຕິບຸກຄົນຕ່າງປະເທດ);

9) ໜັງສືຢັ້ງຢືນ ກ່ຽວກັບການປະຕິບັດລະບຽບການຮັກສາຄວາມໝັ້ນຄົງ ຈາກອົງການທີ່ມີສິດອຳນາດໃນໄລຍະ 3 (ສາມ) ປີ ຍ້ອນຫຼັງຕໍ່ເນື່ອງ (ສຳລັບນິຕິບຸກຄົນທີ່ເປັນທະນາຄານຕ່າງປະເທດ), ໃນກໍລະນີບໍ່ໄດ້ຮັບການຈັດອັນດັບຈາກບໍລິສັດຈັດອັນດັບສາກົນ;

10) ໃບລາຍງານຂໍ້ມູນ ປະຫວັດອາຊະຍາກຳ ຫຼື ການກ່ຽວພັນກັບ ອາຊະຍາກອນທັງພາຍໃນ ແລະ ຕ່າງປະເທດ ແລະ ບັນດາຂໍ້ມູນດ້ານລົບທີ່ ອົງການໃດໜຶ່ງທັງພາຍໃນ ແລະ ຕ່າງປະເທດ ໄດ້ຄົ້ນພົບ ກ່ຽວກັບນິຕິບຸກຄົນ, ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ແລະ ຜູ້ບໍລິຫານຂອງຜູ້ຂໍສ້າງຕັ້ງ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກ.

**4.3 ເອກະສານສະເພາະ ສຳລັບຜູ້ຂໍສ້າງຕັ້ງທີ່ເປັນບຸກຄົນ:**

1) ໃບແຈ້ງຊັບສິນ-ໜີ້ສິນ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກ;

2) ເອກະສານຫຼັກຖານຢັ້ງຢືນແຫຼ່ງທຶນທີ່ຈະມາສ້າງຕັ້ງທະນາຄານ ຢັ້ງຢືນໂດຍທະນາຄານທີ່ຮັບຝາກແຫຼ່ງທຶນດັ່ງກ່າວ (ສຳລັບແຫຼ່ງທຶນທີ່ເປັນເງິນ) ແລະ ຢັ້ງຢືນໂດຍອົງການຄຸ້ມຄອງທະບຽນຊັບສິນທີ່ກ່ຽວຂ້ອງ (ສຳລັບແຫຼ່ງທຶນທີ່ເປັນວັດຖຸທີ່ມີການຈົດທະບຽນຄຸ້ມຄອງ) ແລະ ເອກະສານຊື້ຂາຍທີ່ກ່ຽວຂ້ອງ (ສຳລັບແຫຼ່ງທຶນທີ່ເປັນວັດຖຸທີ່ບໍ່ມີການຈົດທະບຽນຄຸ້ມຄອງ);

3) ໜັງສືຍິນຍອມໃຫ້ ທະນາຄານແຫ່ງ ສປປ ລາວ ສາມາດກວດສອບແຫຼ່ງທຶນ;

4) ຊີວະປະຫວັດ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກ, ໃບຢັ້ງຢືນຄຸນວຸດທິ, ໃບຢັ້ງຢືນການຜ່ານງານ, ປະສົບການ ແລະ ວິຊາຊີບ ຂອງຜູ້ຂໍສ້າງຕັ້ງ;

5) ສຳເນົາບັດປະຈຳຕົວ (ສຳເນົາເປັນສີ) ແລະ ໃບແຈ້ງໂທດຕົ້ນສະບັບ ຂອງຜູ້ຖືຮຸ້ນທີ່ເປັນຄົນລາວ. ສຳລັບຜູ້ຂໍສ້າງຕັ້ງທີ່ເປັນຄົນຕ່າງປະເທດ ຕ້ອງມີສຳເນົາໜັງສືຜ່ານແດນ (ສຳເນົາເປັນສີ) ແລະ ໃບແຈ້ງໂທດ ຫຼື ເອກະສານທີ່ຄ້າຍຄືກັນ (ຕົ້ນສະບັບ) ໂດຍມີການຢັ້ງຢືນຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;

6) ໃບລາຍງານຂໍ້ມູນ ປະຫວັດອາຊະຍາກຳ ຫຼື ການກ່ຽວພັນກັບອາຊະຍາກອນທັງພາຍໃນ ແລະ ຕ່າງປະເທດ ແລະ ບັນດາຂໍ້ມູນດ້ານລົບທີ່ອົງການໃດໜຶ່ງທັງພາຍໃນ ແລະ ຕ່າງປະເທດ ໄດ້ຄົ້ນພົບ ກ່ຽວກັບຜູ້ຂໍສ້າງຕັ້ງ ຕາມແບບພິມທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກ.

**4.4 ເອກະສານສະເພາະ ສຳລັບຜູ້ທີ່ຈະຖືກແຕ່ງຕັ້ງເປັນຜູ້ບໍລິຫານ:**

1) ຊີວະປະຫວັດຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກ, ໃບຢັ້ງຢືນຄຸນວຸດທິ, ໃບຢັ້ງຢືນການຜ່ານງານ, ປະສົບການ ແລະ ວິຊາຊີບ ໃນໄລຍະ 5 (ຫ້າ) ປີ ຜ່ານມາຕໍ່ເນື່ອງກັນ ຂອງຜູ້ບໍລິຫານ (ລວມທັງຜູ້ກວດກາພາຍໃນ) ຂອງທະນາຄານທີ່ຈະສ້າງຕັ້ງ;

2) ສຳເນົາບັດປະຈຳຕົວ (ສຳເນົາເປັນສີ) ແລະ ໃບແຈ້ງໂທດຕົ້ນສະບັບ ຂອງຜູ້ບໍລິຫານທີ່ເປັນຄົນລາວ. ສຳລັບຜູ້ບໍລິຫານທີ່ເປັນຄົນຕ່າງປະເທດ ຕ້ອງມີສຳເນົາໜັງສືຜ່ານແດນ (ສຳເນົາເປັນສີ) ແລະ ໃບແຈ້ງໂທດ ຫຼື ເອກະສານທີ່ຄ້າຍຄືກັນ (ຕົ້ນສະບັບ) ໂດຍມີການຢັ້ງຢືນຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;

3) ໃບລາຍງານຂໍ້ມູນ ປະຫວັດອາຊະຍາກຳ ຫຼື ການກ່ຽວພັນກັບ ອາຊະຍາກອນທັງພາຍໃນ ແລະ ຕ່າງປະເທດ ແລະ ບັນດາຂໍ້ມູນດ້ານລົບທີ່ ອົງການໃດໜຶ່ງທັງພາຍໃນ ແລະ ຕ່າງປະເທດ ໄດ້ຄົ້ນພົບ ກ່ຽວກັບຜູ້ບໍລິຫານ ຕາມແບບພິມທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກ.

**4.5 ສຳລັບການຂໍສ້າງຕັ້ງສາຂາທະນາຄານທຸລະກິດຕ່າງປະເທດ** ໃຫ້ປະຕິບັດຕາມຂໍ້ 4.1 (ຍົກເວັ້ນຂໍ້ 5 ແລະ 6), ຂໍ້ 4.2 ແລະ 4.4 ຂອງມາດຕານີ້; ຕ້ອງມີເອກະສານຕົ້ນສະບັບມະຕິຕົກລົງຂອງສະພາບໍລິຫານ, ກອງປະຊຸມຜູ້ຖືຮຸ້ນ ຫຼື ຜູ້ທີ່ມີສິດອຳນາດຂອງຜູ້ຂໍສ້າງຕັ້ງກ່ຽວກັບການຮັບຮອງເອົາເອກະສານຕາມທີ່ກຳນົດໄວ້ໃນຂໍ້ 4.1 (ຂໍ້ 1 ຫາ 4) ແລະ ການແຕ່ງຕັ້ງຄະນະຜູ້ບໍລິຫານຊຸດທຳອິດ ແລະ ຕ້ອງມີຄຳໝັ້ນສັນຍາຂອງທະນາຄານແມ່ ໃນການປະຕິບັດພັນທະໜີ້ສິນແທນສາຂາຂອງຕົນທີ່ຕັ້ງຢູ່ ສປປ ລາວ.

ສຳລັບເອກະສານຫຼັກຖານຢັ້ງຢືນແຫຼ່ງທຶນທີ່ຈະມາສ້າງຕັ້ງທະນາຄານ, ໃຫ້ປະກອບມີ ໃບລອກກ່າຍບັນຊີຫົກເດືອນຫຼ້າສຸດ ຂອງຜູ້ຖືຮຸ້ນສ້າງຕັ້ງທີ່ກ່ຽວຂ້ອງ ຊຶ່ງອອກໂດຍທະນາຄານບ່ອນທີ່ເປີດບັນຊີດັ່ງກ່າວ; ຄຳຊີ້ແຈງກ່ຽວກັບ ການໄດ້ມາຂອງແຫຼ່ງທຶນດັ່ງກ່າວພ້ອມດ້ວຍເອກະສານຢັ້ງຢືນທີ່ກ່ຽວຂ້ອງ.

ສຳນວນຄຳຮ້ອງການຂໍສ້າງຕັ້ງ ຕ້ອງປະກອບເປັນພາສາລາວ. ສຳລັບເອກະສານທີ່ມີການແປຈາກພາສາຕ່າງປະເທດເປັນພາສາລາວ ຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານຂອງ ສປປ ລາວ. ບັນດາເອກະສານ ລວມທັງສຳເນົາຕ້ອງຈະແຈ້ງສາມາດອ່ານເຂົ້າໃຈໄດ້.

## ມາດຕາ 5. ການຍື່ນສຳນວນຄຳຮ້ອງຂໍສ້າງຕັ້ງ

ສຳນວນຄຳຮ້ອງຂໍສ້າງຕັ້ງທະນາຄານທຸລະກິດ ຫຼື ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງຍື່ນຜ່ານຫ້ອງການບໍລິການລົງທຶນປະຕູດຽວຂອງກົມຈະການທົ່ວໄປຢູ່ກະຊວງອຸດສາຫະກຳ ແລະ ການຄ້າ. ພາຍຫຼັງໄດ້ຮັບສຳນວນຄຳຮ້ອງຂໍສ້າງ ຕັ້ງທີ່ສົ່ງມາຈາກກະຊວງການດັ່ງກ່າວ, ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາສຳນວນຄຳຮ້ອງຂໍສ້າງຕັ້ງຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

## ມາດຕາ 6. ການພິຈາລະນາສຳນວນຄຳຮ້ອງຂໍສ້າງຕັ້ງ

ພາຍຫຼັງທີ່ໄດ້ຮັບສຳນວນຄຳຮ້ອງຂໍສ້າງຕັ້ງຄົບຖ້ວນ ແລະ ຖືກຕ້ອງ ຕາມຂໍ້ຕົກລົງສະບັບນີ້, ທະນາຄານແຫ່ງ ສປປ ລາວ ຈະດຳເນີນການພິຈາລະນາສຳນວນຄຳຮ້ອງຂໍສ້າງຕັ້ງ ແລະ ຈະແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ຂໍສ້າງຕັ້ງຊາບ ພາຍໃນກຳນົດເວລາ 90 (ເກົ້າສິບ) ວັນ ນັບແຕ່ວັນໄດ້ຮັບສຳນວນຄຳຮ້ອງຂໍສ້າງຕັ້ງຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ.

ທະນາຄານແຫ່ງ ສປປ ລາວຈະກວດຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງຂອງສຳນວນຄຳຮ້ອງ ແລະ ການປະຕິບັດເງື່ອນໄຂການຂໍສ້າງຕັ້ງຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

## ມາດຕາ 7. ການອອກໃບອະນຸຍາດຊົ່ວຄາວ

ທະນາຄານແຫ່ງ ສປປ ລາວ ຈະອອກໃບອະນຸຍາດສ້າງຕັ້ງຊົ່ວຄາວ ໃຫ້ຜູ້ຂໍສ້າງຕັ້ງ ຖ້າມີເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ກຳນົດໄວ້ໃນ ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້, ມີແຜນດຳເນີນທຸລະກິດທີ່ດີ ແລະ ສົມເຫດສົມຜົນ ແລະ ມີເງື່ອນໄຂ ດັ່ງນີ້:

**7.1 ສຳລັບຜູ້ຂໍສ້າງຕັ້ງທີ່ເປັນທະນາຄານ:**

- ການດຳເນີນທຸລະກິດຕະຫຼອດໄລຍະ 3 (ສາມ) ປີ ມີຜົນກຳໄລຢ່າງຕໍ່ເນື່ອງ ແລະ ບໍ່ມີຂາດທຶນສະສົມ;
- ຕ້ອງມີແຫຼ່ງທຶນພຽງພໍ,ຈະແຈ້ງ ແລະ ຖືກຕ້ອງຕາມກົດໝາຍ ແລະ ມີຊັບສິນບໍ່ຫຼຸດ 40.000.000.000.000 (ສີ່ສິບພັນຕື້) ກີບ ຫຼື ທຽບເທົ່າ 5.000.000.000 (ຫ້າຕື້) ໂດລາສະຫະລັດ ໃນປີການເງິນທີ່ຂໍສ້າງຕັ້ງ;
- ໄດ້ຮັບການຈັດອັນດັບ BBB ຂຶ້ນໄປ ຈາກສະຖາບັນຈັດອັນດັບສາກົນ ຫຼື ໄດ້ຮັບການຈັດອັນດັບດີຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;
- ກໍລະນີຜູ້ຂໍສ້າງຕັ້ງເປັນທະນາຄານຈາກຕ່າງປະເທດ, ຕ້ອງໄດ້ຮັບອະນຸຍາດ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ ໃນການມາລົງທຶນສ້າງຕັ້ງທະນາຄານທຸລະກິດຢູ່ ສປປ ລາວ;
- ມີໂຄງປະກອບຜູ້ຖືຮຸ້ນຂອງຕົນທີ່ຈະແຈ້ງ ແລະ ເປັນຈິງ;
- ເປັນນິຕິບຸກຄົນທີ່ມີຄວາມເໝາະສົມໃນການໄດ້ຮັບໃບອະນຸຍາດສ້າງຕັ້ງທະນາຄານ;
- ບໍ່ຢູ່ໃນບັນຊີດຳກ່ຽວກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**7.2 ສຳລັບຜູ້ຂໍສ້າງຕັ້ງທີ່ເປັນນິຕິບຸກຄົນ ທີ່ບໍ່ແມ່ນທະນາຄານ:**

- ການດຳເນີນທຸລະກິດຕະຫຼອດໄລຍະ 3 (ສາມ) ປີ ມີຜົນກຳໄລຢ່າງຕໍ່ເນື່ອງ ແລະ ບໍ່ມີຂາດທຶນສະສົມ;
- ຕ້ອງມີແຫຼ່ງທຶນພຽງພໍ, ຈະແຈ້ງ ແລະ ຖືກຕ້ອງຕາມກົດໝາຍ ແລະ ບໍ່ຫຼຸດສອງເທົ່າຂອງມູນຄ່າຮຸ້ນທີ່ຈະຖືໃນທະນາຄານທີ່ຂໍສ້າງຕັ້ງ ໃນປີການເງິນທີ່ຂໍສ້າງຕັ້ງ;
- ມີໂຄງປະກອບຜູ້ຖືຮຸ້ນຂອງຕົນທີ່ຈະແຈ້ງ ແລະ ເປັນຈິງ;
- ເປັນນິຕິບຸກຄົນທີ່ມີຄວາມເໝາະສົມໃນການໄດ້ຮັບໃບອະນຸຍາດສ້າງຕັ້ງທະນາຄານ;
- ບໍ່ຢູ່ໃນບັນຊີດຳກ່ຽວກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**7.3 ສຳລັບຜູ້ຂໍສ້າງຕັ້ງທີ່ເປັນບຸກຄົນ:**

- ຕ້ອງມີແຫຼ່ງທຶນພຽງພໍ, ຈະແຈ້ງ ແລະ ຖືກຕ້ອງຕາມກົດໝາຍ ແລະ ບໍ່ຫຼຸດສອງເທົ່າຂອງມູນຄ່າຮຸ້ນທີ່ຈະຖືໃນທະນາຄານທີ່ຂໍສ້າງຕັ້ງ ໃນປີການເງິນທີ່ຂໍສ້າງຕັ້ງ;
- ກໍລະນີເປັນຜູ້ຖືຮຸ້ນລາຍໃຫຍ່, ຕ້ອງມີຄຸນວຸດທິ ແລະ ປະສົບການເໝາະສົມກັບການດຳເນີນທຸລະກິດດ້ານການເງິນ-ການທະນາຄານ;
- ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ, ການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ການກະທຳຜິດທາງອາຍາອື່ນທີ່ກ່ຽວຂ້ອງທາງດ້ານການເງິນ ແລະ ເງິນຕາ ຫຼື ການຄ້າຢາເສບຕິດ;
- ເປັນບຸກຄົນທີ່ມີຄວາມເໝາະສົມໃນການໄດ້ຮັບໃບອະນຸຍາດສ້າງຕັ້ງທະນາຄານ;
- ບໍ່ຢູ່ໃນບັນຊີດຳກ່ຽວກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

7.4 **ສຳລັບຜູ້ບໍລິຫານ:**

- ມີຄວາມສາມາດທາງດ້ານການປະພຶດ;
- ມີປະສົບການທາງດ້ານບໍລິຫານຈັດການ ແລະ ມີຄວາມຮູ້ຄວາມສາມາດທາງດ້ານການເງິນ-ການທະນາຄານ;
- ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ, ການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ການກະທຳຜິດທາງອາຍາອື່ນທີ່ກ່ຽວຂ້ອງທາງດ້ານການເງິນ ແລະ ເງິນຕາ ຫຼື ການຄ້າຢາເສບຕິດ;
- ເປັນບຸກຄົນທີ່ມີຄວາມເໝາະສົມໃນການເປັນຜູ້ບໍລິຫານຂອງທະນາຄານ;
- ບໍ່ເຄີຍຖືກປົດອອກຈາກການເປັນຜູ້ບໍລິຫານໃນນິຕິບຸກຄົນອື່ນ, ບໍ່ຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະ ບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນທີ່ຖືກສານຕັດສິນໃຫ້ລົ້ມລະລາຍ.

ຜູ້ທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຊົ່ວຄາວບໍ່ສາມາດເຄື່ອນໄຫວທຸລະກິດໄດ້, ແຕ່ສາມາດນຳໃຊ້ເພື່ອປະກອບເປັນຫຼັກຖານອ້າງອີງປະຕິບັດເງື່ອນໄຂຄວາມພ້ອມທີ່ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

ຜູ້ທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຊົ່ວຄາວ ຕ້ອງເປີດບັນຊີທຶນຈົດທະບຽນ ຫຼື ເງິນລົງທຶນຢູ່ທະນາຄານແຫ່ງ ສປປ ລາວ ແລະ ຕ້ອງຖອກທຶນຈົດທະບຽນ ຫຼື ເງິນລົງທຶນໃຫ້ຄົບຖ້ວນ ພາຍຫຼັງທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຊົ່ວຄາວ. ທຶນຈົດທະບຽນ ຫຼື ເງິນລົງທຶນທີ່ເປັນເງິນຕາຕ່າງປະເທດຈະຖືກແລກປ່ຽນເປັນສະກຸນເງິນກີບ ໃນມື້ທີ່ທະນາຄານແຫ່ງ ສປປ ລາວ ອອກໃບອະນຸຍາດສ້າງຕັ້ງຖາວອນ ຕາມອັດຕາຊື້ຂອງກົມບໍລິການ ທະນາຄານແຫ່ງ ສປປ ລາວ. ການຖອກທຶນຈົດທະບຽນ ຫຼື ເງິນລົງທຶນຕ້ອງເຮັດຜ່ານລະບົບບັນຊີທະນາຄານບໍ່ວ່າແຫຼ່ງທຶນຈະມາຈາກພາຍໃນ ຫຼື ຕ່າງປະເທດ ແລະ ຫ້າມຖອກເປັນເງິນສົດ.

ໃບອະນຸຍາດສ້າງຕັ້ງຊົ່ວຄາວ ມີອາຍຸການນໍາໃຊ້ 180 (ໜຶ່ງຮ້ອຍແປດສິບ) ວັນ ນັບແຕ່ວັນໄດ້ຮັບອະນຸຍາດເປັນຕົ້ນໄປ. ຜູ້ທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຊົ່ວຄາວ ຕ້ອງປະຕິບັດເງື່ອນໄຂຄວາມພ້ອມຕາມທີ່ກໍານົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້. ກໍລະນີການປະຕິບັດເງື່ອນໄຂດັ່ງກ່າວ ມີຄວາມຄືບໜ້າແຕ່ບໍ່ສາມາດປະຕິບັດສໍາເລັດພາຍໃນ 180 ວັນ, ສາມາດຂໍຕໍ່ອາຍຸການດັ່ງກ່າວ ໄດ້ອີກຄັ້ງລະ 90 (ເກົ້າສິບ) ວັນ ແຕ່ທັງໝົດບໍ່ໃຫ້ເກີນສອງຄັ້ງ. ຖ້າບໍ່ສາມາດປະຕິບັດເງື່ອນໄຂຄວາມພ້ອມພາຍໃນກໍານົດເວລາດັ່ງກ່າວ, ໃບອະນຸຍາດຊົ່ວຄາວ ກໍ່ຈະຕົກໄປ.

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາເງື່ອນໄຂຄວາມເໝາະສົມຂອງຜູ້ທີ່ຈະໄດ້ຮັບໃບອະນຸຍາດ ຫຼື ເປັນຜູ້ບໍລິຫານຂອງທະນາຄານ ເພື່ອສະກັດກັ້ນບໍ່ໃຫ້ ອາຊະຍາກອນ ແລະ ຜູ້ກ່ຽວພັນກັບອາຊະຍາກອນໄດ້ຮັບໃບອະນຸຍາດ ຫຼື ເປັນຜູ້ບໍລິຫານຂອງທະນາຄານ. ໃນການພິຈາລະນາດັ່ງກ່າວ, ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາປະຫວັດອາຊະຍາກໍາ ແລະ ການກ່ຽວພັນກັບອາຊະຍາກອນ ແລະ ບັນດາຂໍ້ມູນດ້ານລົບທີ່ ອີງການໃດໜຶ່ງທັງພາຍໃນ ແລະ ຕ່າງປະເທດ ໄດ້ຄົ້ນພົບ.

ພາຍຫຼັງຜູ້ທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຊົ່ວຄາວໄດ້ປະຕິບັດ ເງື່ອນໄຂຄວາມພ້ອມສໍາເລັດ, ຈຶ່ງສະເໜີໃຫ້ ທະນາຄານ ແຫ່ງ ສປປ ລາວ ລົງກວດກາຕົວຈິງເພື່ອພິຈາລະນາອອກໃບອະນຸຍາດສ້າງຕັ້ງຖາວອນ.

## ມາດຕາ 8. ການອອກໃບອະນຸຍາດສ້າງຕັ້ງຖາວອນ

ທະນາຄານແຫ່ງ ສປປ ລາວ ຈະອອກໃບອະນຸຍາດສ້າງຕັ້ງຖາວອນ ໃຫ້ຜູ້ຂໍສ້າງຕັ້ງ ພາຍໃນກໍານົດ 10 (ສິບ) ວັນລັດຖະການ ຖ້າມີເງື່ອນໄຂຄວາມພ້ອມ ດັ່ງນີ້:

1) ຖອກທຶນຈົດທະບຽນຕໍ່າສຸດ ຂອງທະນາຄານທຸລະກິດ ຫຼື ເງິນລົງທຶນຕໍ່າສຸດຂອງສາຂາທະນາຄານທຸລະກິດຕ່າງ ປະເທດ ຢ່າງຄົບຖ້ວນ;
2) ມີພະນັກງານທີ່ຜ່ານການຝຶກອົບຮົມດ້ານການທະນາຄານຢູ່ພາຍໃນ ຫຼື ຕ່າງປະເທດໃນຈໍານວນພຽງພໍ. ອັດຕາສ່ວນພະນັກງານທີ່ເປັນຄົນຕ່າງປະເທດ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍແຮງງານ. ຜູ້ຂໍສ້າງຕັ້ງຕ້ອງປະຕິບັດພັນທະ ແລະ ລະບຽບການຕໍ່ກັບພະນັກງານຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍແຮງງານຂອງ ສປປ ລາວ ທີ່ວາງອອກ;
3) ມີອາຄານສໍານັກງານທີ່ແໜ້ນໜາຖາວອນ. ສໍາລັບທີ່ດິນນໍາໃຊ້ປຸກສ້າງສໍານັກງານ ກໍລະນີເຊົ່າ ຫຼື ສໍາປະທານ, ກໍານົດເວລາສັນຍາເຊົ່າ ຫຼື ສໍາປະທານ ຕ້ອງບໍ່ຫຼຸດ 20 (ຊາວ) ປີ. ມີລະບົບຄັງສາງທີ່ປອດໄພ ແລະ ລະບົບຮັກສາຄວາມປອດໄພຕາມລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ວາງອອກ;
4) ມີຄວາມພ້ອມທາງດ້ານລະບົບຖານຂໍ້ມູນຫຼັກທີ່ທັນສະໄໝ ສາມາດບໍລິຫານວຽກງານພາຍໃນໃຫ້ມີຄວາມປອດໄພ ແລະມີປະສິດທິພາບ, ສາມາດເຊື່ອມໂຍງກັບ ທະນາຄານ ແຫ່ງ ສປປ ລາວ ແລະ ຮັບປະກັນການປະຕິບັດລະບອບລາຍງານ ແລະ ການດໍາເນີນທຸລະກໍາອື່ນກັບ ທະນາຄານແຫ່ງ ສປປ ລາວ ໂດຍສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ;
5) ມີລະບົບບໍລິຫານ ແລະ ຄູ່ມືດໍາເນີນງານ ກ່ຽວກັບວຽກງານການບັນຊີ, ການບໍລິຫານຄວາມສ່ຽງ, ການກວດກາພາຍໃນ, ການຄຸ້ມຄອງພະນັກງານ, ການບໍລິການຜະລິດຕະພັນຕ່າງໆ, ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ອື່ນໆ ທີ່ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ;

6) ມີບົດວິພາກເສດຖະກິດ-ເຕັກນິກທີ່ດີ, ສົມເຫດສົມຜົນ ແລະ ສາມາດຈັດຕັ້ງປະຕິບັດໄດ້, ມີກົດລະບຽບທີ່ຮັດກຸມ, ຄົບຖ້ວນ ແລະ ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

ຜູ້ທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນແລ້ວ ຕ້ອງຊໍາລະຄ່າທໍານຽມໃຫ້ຄົບຖ້ວນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ແລະ ຕ້ອງໄປແຈ້ງຂຶ້ນທະບຽນວິສາຫະກິດ ແລະ ເຄື່ອນໄຫວທຸລະກິດພາຍໃນກໍານົດເວລາ 90 (ເກົ້າສິບ) ວັນ ນັບແຕ່ມື້ທີ່ໄດ້ຮັບໃບທະບຽນວິສາຫະກິດເປັນຕົ້ນໄປ.

### ມາດຕາ 9. ການຍົກສາຂາທະນາຄານທຸລະກິດຕ່າງປະເທດຂຶ້ນເປັນທະນາຄານທຸລະກິດ

ການຍົກສາຂາທະນາຄານທຸລະກິດຕ່າງປະເທດ ເປັນທະນາຄານທຸລະກິດ ແມ່ນໃຫ້ປະຕິບັດຄືກັນກັບການສ້າງຕັ້ງທະນາຄານທຸລະກິດທີ່ກໍານົດໄວ້ໃນໝວດ II ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ III

## ການສ້າງຕັ້ງສາຂາທະນາຄານທຸລະກິດ ແລະ ໜ່ວຍບໍລິການຂອງທະນາຄານທຸລະກິດພາຍໃນ

### ມາດຕາ 10. ການຂໍສ້າງຕັ້ງສາຂາທະນາຄານທຸລະກິດພາຍໃນ

ທະນາຄານທຸລະກິດທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນແລ້ວ ສາມາດຂໍສ້າງຕັ້ງສາຂາຂອງຕົນໃນ ສປປ ລາວ ຊຶ່ງຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

- ປະຕິບັດລະບຽບການກ່ຽວກັບການຮັກສາຄວາມໝັ້ນຄົງໄດ້ດີ;
- ມີທຶນທີ່ພຽງພໍເພື່ອຂະຫຍາຍສາຂາ;
- ມີພະນັກງານພຽງພໍ, ມີຄວາມສາມາດໃນການບໍລິຫານຈັດການ, ໃນນັ້ນຜູ້ບໍລິຫານຂອງສາຂາທີ່ຂໍສ້າງຕັ້ງຕ້ອງມີເງື່ອນໄຂຄືດັ່ງທີ່ກໍານົດໄວ້ໃນ ມາດຕາ 7 ຂໍ້ 7.4 ຂອງຂໍ້ຕົກລົງສະບັບນີ້;
- ມີກົນໄກ ແລະ ລະບຽບການຄຸ້ມຄອງທີ່ຮັດກຸມ; ມີລະບົບໄອທີທີ່ສາມາດຮອງຮັບການດໍາເນີນງານຂອງສາຂາ ແລະ ສາມາດເຊື່ອມໂຍງກັນລະຫວ່າງສາຂາ ແລະ ສໍານັກງານໃຫຍ່ ແລະ ມີລະບົບຮັກສາຄວາມປອດໄພທີ່ດີ.

ຜູ້ຂໍສ້າງຕັ້ງສາຂາ ຕ້ອງປະກອບສໍານວນຄໍາຮ້ອງຂໍສ້າງຕັ້ງສາຂາ ຊຶ່ງປະກອບດ້ວຍເອກະສານດັ່ງນີ້:

1) ຄໍາຮ້ອງຂໍສ້າງຕັ້ງ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກໍານົດອອກ;
2) ບົດວິພາກເສດຖະກິດ-ເຕັກນິກ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກໍານົດອອກ;
3) ກົດລະບຽບຄຸ້ມຄອງສາຂາ ຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວ ກໍານົດອອກ;
4) ກໍລະນີໃຫ້ຜູ້ອື່ນມາຍື່ນສໍານວນຄໍາຮ້ອງແທນ, ຕ້ອງມີໃບມອບສິດໃຫ້ຜູ້ຕາງໜ້າ (ຜູ້ຕາງໜ້າຕ້ອງແມ່ນນິຕິບຸກຄົນ ທີ່ຖືກສ້າງຕັ້ງ ຕາມລະບຽບກົດໝາຍຂອງ ສປປ ລາວ);
5) ມະຕິກອງປະຊຸມຂອງສະພາບໍລິຫານຂອງຜູ້ຂໍສ້າງຕັ້ງ ກ່ຽວກັບການຮັບຮອງເອົາ ຂໍ້ 2) ຫາ ຂໍ້ 4) ຂ້າງເທິງນີ້ ແລະ ການແຕ່ງຕັ້ງຜູ້ບໍລິຫານຊຸດທໍາອິດ;

6) ມະຕິຕົກລົງຂອງສະພາບໍລິຫານ ຫຼື ກອງປະຊຸມຜູ້ຖືຮຸ້ນ ຂອງຜູ້ຂໍສ້າງຕັ້ງກ່ຽວກັບການຕົກລົງສ້າງຕັ້ງສາຂາທະນາຄານ;

7) ສຳເນົາເອກະສານຢັ້ງຢືນຖານະການເງິນຂອງຜູ້ຂໍສ້າງຕັ້ງໂດຍໄດ້ຮັບການກວດສອບ ຈາກອົງການກວດສອບພາຍນອກ 3 (ສາມ) ປີ ຍ້ອນຫຼັງຕໍ່ເນື່ອງ;

8) ຊີວະປະຫວັດຕາມແບບພິມທີ່ ທະນາຄານແຫ່ງ ສປປ ລາວກຳນົດອອກ, ໃບຢັ້ງຢືນຄຸນວຸດທິ, ໃບຢັ້ງຢືນການຜ່ານງານ, ປະສົບການ ແລະ ວິຊາຊີບ ໃນໄລຍະ 5 (ຫ້າ) ປີ ຜ່ານມາຕໍ່ເນື່ອງກັນຂອງຜູ້ບໍລິຫານ (ລວມທັງຜູ້ກວດກາພາຍໃນ) ຂອງສາຂາທີ່ຈະຖືກສ້າງຕັ້ງ;

9) ສຳເນົາບັດປະຈຳຕົວ (ສຳເນົາເປັນສີ) ແລະ ໃບແຈ້ງໂທດຕົ້ນສະບັບ ຂອງຜູ້ບໍລິຫານທີ່ເປັນຄົນລາວ, ສຳເນົາໜັງສືຜ່ານແດນ (ສຳເນົາເປັນສີ) ແລະ ໃບແຈ້ງໂທດ ຫຼື ເອກະສານທີ່ຄ້າຍຄືກັນ (ຕົ້ນສະບັບ) ໂດຍມີການຢັ້ງຢືນຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ ຂອງຜູ້ບໍລິຫານທີ່ເປັນຄົນຕ່າງປະເທດ;

10) ສຳເນົາໃບຢັ້ງຢືນຈາກກົມບໍລິການ, ທະນາຄານແຫ່ງ ສປປ ລາວ ກ່ຽວກັບການຈ່າຍຄ່າທຳນຽມ ຄຳຮ້ອງຂໍສ້າງຕັ້ງ.

ສຳນວນຄຳຮ້ອງການຂໍສ້າງຕັ້ງ ຕ້ອງປະກອບເປັນພາສາລາວ. ສຳລັບເອກະສານທີ່ມີການແປຈາກພາສາຕ່າງປະເທດເປັນພາສາລາວ ຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານຂອງ ສປປ ລາວ. ບັນດາເອກະສານ ລວມທັງສຳເນົາຕ້ອງຈະແຈ້ງສາມາດອ່ານເຂົ້າໃຈໄດ້.

ສຳນວນຄຳຮ້ອງແມ່ນໃຫ້ຍື່ນຕໍ່ ທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາ ຕາມເງື່ອນໄຂຂ້າງເທິງ. ທະນາຄານແຫ່ງ ສປປ ລາວຈະແຈ້ງ ເປັນລາຍລັກອັກສອນ ໃຫ້ຜູ້ຂໍສ້າງຕັ້ງຊາບກ່ຽວກັບການຕົກລົງເຫັນດີດ້ານຫຼັກການ ຫຼື ປະຕິເສດການຂໍສ້າງຕັ້ງສາຂາ ພາຍໃນກຳນົດເວລາ 60 (ຫົກສິບ) ວັນ ນັບແຕ່ວັນໄດ້ຮັບສຳນວນຄຳຮ້ອງຂໍສ້າງຕັ້ງຄົບຖ້ວນເປັນຕົ້ນໄປ. ໃນກໍລະນີທະນາຄານແຫ່ງ ສປປ ລາວ ຕົກລົງເຫັນດີດ້ານຫຼັກການໃຫ້ສ້າງຕັ້ງສາຂາ, ຜູ້ຂໍສ້າງຕັ້ງຕ້ອງດຳເນີນການກະກຽມຄວາມພ້ອມພາຍໃນ 180 (ໜຶ່ງຮ້ອຍແປດສິບ) ວັນ ແລະ ສາມາດຂໍຕໍ່ໄດ້ອີກ 90 (ເກົ້າສິບ) ວັນ ຖ້າມີເຫດຜົນພຽງພໍ.

ພາຍຫຼັງຜູ້ຂໍສ້າງຕັ້ງໄດ້ກະກຽມຄວາມພ້ອມສຳເລັດ, ຈຶ່ງສະເໜີໃຫ້ ທະນາຄານ ແຫ່ງ ສປປ ລາວ ລົງກວດກາຕົວຈິງເພື່ອພິຈາລະນາອອກໃບອະນຸຍາດສ້າງຕັ້ງສາຂາ.

## ມາດຕາ 11. ການສ້າງຕັ້ງໜ່ວຍບໍລິການພາຍໃນ

ທະນາຄານທຸລະກິດ ທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນແລ້ວ ສາມາດສ້າງຕັ້ງໜ່ວຍບໍລິການຂອງຕົນໄດ້ ແຕ່ຕ້ອງແຈ້ງໃຫ້ທະນາຄານແຫ່ງ ສປປ ລາວ ຊາບຢ່າງເປັນລາຍລັກອັກສອນພາຍໃນກຳນົດເວລາ 15 (ສິບຫ້າ) ວັນ ນັບແຕ່ວັນສ້າງ ຕັ້ງເປັນຕົ້ນໄປ ພ້ອມທັງຄັດຕິດມະຕິຕົກລົງຂອງກອງປະຊຸມສະພາບໍລິຫານ ກ່ຽວກັບການອະນຸມັດສ້າງຕັ້ງໜ່ວຍບໍລິການ ແລະ ລະບຽບການຄຸ້ມຄອງໜ່ວຍບໍລິການ. ລະບຽບຄຸ້ມຄອງໜ່ວຍບໍລິການຂອງທະນາຄານຕ້ອງມີເນື້ອໃນຕົ້ນຕໍດັ່ງນີ້:

1) ໂຄງປະກອບການຈັດຕັ້ງ;

2) ການກຳນົດຕຳແໜ່ງງານ;

3) ຂອບເຂດສິດໃນການໃຫ້ບໍລິການ;

4) ລະບົບກວດກາ ແລະ ລາຍງານ.

ໃຫ້ໜ່ວຍບໍລິການສາມາດເລີ່ມເຄື່ອນໄຫວໃຫ້ບໍລິການ ໄດ້ພາຍຫຼັງ 15 ວັນ ນັບແຕ່ວັນທີ່ ທະນາຄານແຫ່ງ ສປປ ລາວ ໄດ້ຮັບການແຈ້ງຢ່າງເປັນລາຍລັກອັກສອນ ກ່ຽວກັບ ການສ້າງຕັ້ງໜ່ວຍບໍລິການດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນວັກໜຶ່ງຂອງມາດຕານີ້.

ໜ່ວຍບໍລິການຂອງທະນາຄານ ສາມາດໃຫ້ບໍລິການຮັບຝາກເງິນ, ເບີກຖອນເງິນສົດ, ໂອນເງິນຕາມຄຳສັ່ງຂອງລູກຄ້າ, ໃຫ້ບໍລິການແລກປ່ຽນເງິນຕາຕ່າງປະເທດ ແຕ່ບໍ່ສາມາດອະນຸມັດສິນເຊື່ອໃຫ້ແກ່ລູກຄ້າໄດ້.

ສາຂາທະນາຄານທຸລະກິດຕ່າງປະເທດ ບໍ່ສາມາດຂະຫຍາຍໜ່ວຍບໍລິການຂອງຕົນໄດ້ ລວມທັງໜ່ວຍແລກປ່ຽນເງິນຕາຕ່າງປະເທດ.

### ມາດຕາ 12. ການຍົກໜ່ວຍບໍລິການຂຶ້ນເປັນສາຂາທະນາຄານທຸລະກິດພາຍໃນ

ການຍົກໜ່ວຍບໍລິການຂຶ້ນເປັນສາຂາທະນາຄານທຸລະກິດພາຍໃນ ແມ່ນໃຫ້ປະຕິບັດຄືກັນກັບການສ້າງຕັ້ງສາຂາທະນາຄານທຸລະກິດພາຍໃນ ທີ່ກຳນົດໄວ້ໃນໝວດ III ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ IV
## ຂໍ້ກຳນົດອື່ນໆ

### ມາດຕາ 13. ການປະຕິບັດຕາມລະບຽບກົດໝາຍຂອງ ສປປ ລາວ

ການສ້າງຕັ້ງທະນາຄານທຸລະກິດ, ສາຂາທະນາຄານທຸລະກິດ ລວມທັງໜ່ວຍບໍລິການຂອງທະນາຄານທຸລະກິດ ຢູ່ ສປປ ລາວ ຕ້ອງປະຕິບັດຕາມຂໍ້ຕົກລົງສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ ເປັນຕົ້ນ: ການຕິດຕັ້ງປ້າຍທະນາຄານ, ການມີກາປະທັບ, ການຂໍອະນຸຍາດປຸກສ້າງ ແລະ ອື່ນໆ ຕາມການກຳນົດຂອງຂະແໜງການທີ່ກ່ຽວຂ້ອງ.

### ມາດຕາ 14. ການຂໍອະນຸຍາດ ແລະ ການລາຍງານ ກ່ຽວກັບການປ່ຽນແປງຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ

ການປ່ຽນແປງຜູ້ຖືຮຸ້ນລາຍໃຫຍ່ຂອງທະນາຄານທຸລະກິດ ຕ້ອງໄດ້ຮັບອະນຸຍາດ ຈາກທະນາຄານ ແຫ່ງ ສປປ ລາວ. ການປ່ຽນແປງດັ່ງກ່າວ ຕ້ອງປະຕິບັດໃຫ້ສອດຄ່ອງກັບການຖືຮຸ້ນທີ່ກຳນົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້, ມີເງື່ອນໄຂ ແລະ ປະກອບເອກະສານຄືກັນກັບ ຜູ້ຂໍສ້າງຕັ້ງ ທີ່ກຳນົດໄວ້ໃນມາດຕາ 4 ຂໍ້ 4.2 ຫຼື 4.3 ແລະ ມາດຕາ 7 ຂໍ້ 7.1, 7.2 ຫຼື 7.3 ໃນຂໍ້ຕົກລົງສະບັບນີ້ ແລ້ວຍື່ນຕໍ່ທະນາຄານແຫ່ງ ສປປ ລາວເພື່ອພິຈາລະນາ.

ການປ່ຽນແປງຜູ້ບໍລິຫານ ຂອງທະນາຄານທຸລະກິດ ຫຼື ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດ ຈາກທະນາຄານແຫ່ງ ສປປ ລາວ ແລະ ຕ້ອງມີເງື່ອນໄຂ ແລະ ປະກອບເອກະສານຄືກັນກັບຜູ້ບໍລິຫານ ທີ່ກຳນົດໄວ້ໃນມາດຕາ 4 ຂໍ້ 4.4 ແລະ ມາດຕາ 7 ຂໍ້ 7.4 ໃນຂໍ້ຕົກລົງສະບັບນີ້ ແລ້ວຍື່ນຕໍ່ທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາ.

ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງແຈ້ງໃຫ້ ທະນາຄານແຫ່ງ ສປປ ລາວ ຊາບທັນທີ ກ່ຽວກັບ ການປ່ຽນແປງໃດໆ ທີ່ອາດເຮັດໃຫ້ຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ບໍລິຫານຂອງຕົນ ຂາດເງື່ອນໄຂໃດໜຶ່ງທີ່ກຳນົດໄວ້ໃນ ມາດຕາ 7 ຂໍ້ 7.1, 7.2 ຫຼື 7.3 ຕາມແຕ່ລະກໍລະນີ ໃນຂໍ້ຕົກລົງສະບັບນີ້.

ມາດຕານີ້ນຳໃຊ້ຕໍ່ທຸກທະນາຄານທຸລະກິດທີ່ສ້າງຕັ້ງຂຶ້ນກ່ອນ ຫຼື ຫຼັງພິມສັກສິດຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 15. ມາດຕະການຕໍ່ການລະເມີດ**

ຜູ້ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກດຳເນີນມາດຕະການ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ໝວດທີ V

## ຂໍ້ກຳນົດສຸດທ້າຍ

**ມາດຕາ 16. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ, ກົມກ່ຽວຂ້ອງຂອງທະນາຄານ ແຫ່ງ ສປປ ລາວ, ທະນາຄານທຸລະກິດ, ບຸກຄົນ ແລະ ນິຕິບຸກຄົນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 17. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງໄດ້ພິມເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ຂອງ ສປປ ລາວ 15 (ສິບຫ້າ) ວັນເປັນຕົ້ນໄປ. ບັນດາລະບຽບການກ່ຽວກັບການຂໍສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ ທີ່ທະນາຄານແຫ່ງ ສປປ ລາວ ໄດ້ອອກ ແລະ ນຳໃຊ້ໃນເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ດຣ. ສົມພາວ ໄຟສິດ